ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ກະຊວງສຶກສາທິການ ແລະ ກິລາ**

**ກົມສາມັນສຶກສາ**

**ສັນຍາເລກທີ : 03/2024**

ເລກທີ....2030..../ສມ

ນະຄອນຫຼວງວຽງຈັນ, ວັນທີ 3 ຕຸລາ 2024

## ໜັງສືແຈ້ງເຊີນປະມູນ

1. ກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ ໄດ້ຮັບທຶນຈາກລັດຖະບານເພື່ອນຳໃຊ້ເຂົ້າໃນການຈັດຊື້ເຄື່ອງສະແກນເນີ ເພື່ອສະໜອງໃນວຽກການສອບເສັງຈົບຊັ້ນມັດທະຍົມສຶກສາ ໃນການດຳເນີນການຈັດຊື້ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ.
2. ກົມສາມັນສຶກສາ ຂໍເຊີນບໍລິສັດ ຂອງທ່ານເຂົ້າຍື່ນຊອງປະມູນເປີດກ້ວາງພາຍໃນ ການສະໜອງເຄື່ອງສະແກນເນີ ໄລຍະເວລາໃນການສົ່ງມອບແມ່ນ 30 ວັນ.
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເຫມາະສົມ.
5. ບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ, ຖະໜົນລ້ານຊ້າງ ຕູ້ ປນ. 67 ນະຄອນຫຼວງວຽງຈັນ ໂທ: 021-219215 ຕໍ່ 221; ແຟັກ: 021-219634; ອີເມວ: dge.edu2022@gmail ສາມາດພົວພັນໄດ້ໃນໂມງລັດຖະການ.
6. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນຫນັງສືສະເໜີຫາ ເລີ້ມແຕ່ວັນທີ 4 ຕຸລາ 2024 ເປັນຕົ້ນໄປ, ໃນລາຄາ 200,000 ກີບ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
7. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້,ໃນເວລາ ຫລື ກ່ອນເວລາ 09:30 ໂມງເຊົ້າ ຂອງວັນທີ 1 ພະຈິກ 2024 ຢູ່ທີ່ ກົມສາມັນສຶກສາ ຊັ້ນ 04 ຫ້ອງ 425 ກະຊວງສຶກສາທິການ ແລະ ກິລາ, ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ.
8. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 09:30 ໂມງເຊົ້າ ຂອງວັນທີ ທີ 1 ພະຈິກ 2024 ຢູ່ທີ່ ຫ້ອງປະຊຸມ ຊັ້ນ4 ຫ້ອງ 425 ກະຊວງສຶກສາທິການ ແລະ ກິລາ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ໂດຍຊ້ອງຫນ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.
9. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດມາພ້ອມ.

ວ່າການແທນຫົວໜ້າກົມ

ກະຊວງສຶກສາທິການ ແລະ ກິລາ ກົມສາມັນສຶກສາ

ນວນຄຳ ຈັນທະບູລີ